ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ຫ້ອງວ່າການແຂວງ

ເລກທີ 621/ຫວຂ.ບກ

ບໍ່ແກ້ວ, ວັນທີ 19 ມິຖຸນາ 2017.

# ແຈ້ງການ

**ເຖິງ:** ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ພະແນກ ກະສິກຳ-ປ່າໄມ້ ແຂວງ, ດ່ານພາສີ, ດ່ານສັດຕະວະແພດ, ຕຳຫຼວດເສດຖະກິດ, ເຈົ້າເມືອງ 5 ເມືອງ ທີ່ນັບຖື.

**ເລື່ອງ:** ການຕິດຕາມ,ກວດກາ ແລະ ສະກັດກັ້ນການນຳເຂົ້າ, ເຄື່ອນຍ້າຍ ແລະຈຳໜ່າຍ ໝູຊີ້ນ, ຊີ້ນໝູ (ສົດ ແລະ ແຊ່ແຂງ) ແລະ ຊີ້ນສ່ວນຜະລິດຕະພັນສັດທີ່ບໍ່ຖືກຕ້ອງ.

- **ອີງຕາມ:** ຄຳສັ່ງ ສະບັບເລກທີ 0874/ອຄ.ກຄພນ, ລົງວັນທີ 02 ມິຖຸນາ 2017. ວ່າດ້ວຍການຕິດຕາມ, ກວດກາ ແລະ ສະກັດກັ້ນ ການນຳເຂົ້າ, ເຄື່ອນຍ້າຍ ແລະ ຈຳໜ່າຍຊີ້ນໝູ ( ສົດ, ແຊ່ແຂງ ) ແລະ ຊີ້ນສ່ວນຜະລິດຕະພັນສັດ ທີ່ບໍ່ຖືກຕ້ອງ.
- **ອີງຕາມ :** ບົດບັນທຶກ ກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງ ຄັ້ງວັນທີ 13 ມິຖຸນາ 2017.

ສະພາບການໃນປະຈຸບັນເຫັນວ່າຢູ່ປະເທດໃກ້ຄຽງໄດ້ມີການລ້ຽງໝູ ແລະ ຜະລິດຕະພັນໝູຊີ້ນຢ່າງຫຼວງຫຼາຍເພື່ອສົ່ງອອກ, ແຕ່ເນື່ອງຈາກເກີດມີພະຍາດລະບາດ, ປະເທດປາຍທາງທີ່ຮັບຊື້ໄດ້ມີມາດຕະການຫ້າມນຳເຂົ້າຊີ້ນໝູ ແລະ ຜະລິດຕະພັນສັດ ຈຶ່ງເຮັດໃຫ້ໝູ ແລະ ຜະລິດຕະພັນໝູລົ້ນຕະຫຼາດ, ລາຄາຕົກຕ່ຳ ຍັງມີຄວາມສ່ຽງຕໍ່ການຕິດເຊື້ອພະຍາດ, ດ້ວຍເຫດນັ້ນ, ຈຶ່ງມີຜູ້ປະກອບການຈຳນວນໜຶ່ງ ສວຍໂອກາດລັກລອບນຳເຂົ້າມາຈຳໜ່າຍຢູ່ພາຍໃນ ແລະ ສົ່ງອອກໄປປະເທດທີ່ສາມ.

ເພື່ອປົກປ້ອງຊາວກະສິກອນຜູ້ຜະລິດຢູ່ພາຍໃນປະເທດ ແລະ ເພື່ອສະກັດກັ້ນ ປ້ອງກັນບໍ່ໃຫ້ເກີດມີພະຍາດລະບາດ ທີ່ຕິດເຊື້ອມາຈາກໝູ.

**ຫ້ອງວ່າການແຂວງບໍ່ແກ້ວ,** ຂໍຖືເປັນກຽດຢ່າງສູງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດ ດັ່ງນີ້:

1. ໃຫ້ເອົາໃຈໃສ່ ເພີ່ມທະວີໃນການຕິດຕາມ, ກວດກາ ແລະ ສະກັດກັ້ນການນຳເຂົ້າ, ການເຄື່ອນຍ້າຍ ແລະ ຈຳໜ່າຍ ໝູຊີ້ນ, ຊີ້ນໝູ ( ສົດ ແລະ ແຊ່ແຂງ ) ຊີ້ນສ່ວນຜະລິດຕະພັນສັດທີ່ບໍ່ຖືກຕ້ອງ.
2. ໃຫ້ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຕິດຕາມກວດກາຢູ່ບັນດາດ່ານ, ຈຸດຫຼໍ່ແຫຼມ ທີ່ມັກລັກລອບນຳເຂົ້າສິນຄ້າຕາມຊາຍແດນ, ຕາມທ້ອງຕະຫຼາດ, ຄິວລົດ, ທ່າເຮືອແຕ່ລະຈຸດ ເມື່ອພົບເຫັນການນຳເຂົ້າຊີ້ນໝູ, ໝູຊີ້ນ, ຜະລິດຕະພັນສັດ ໃຫ້ຢຶດ ແລະ ປະຕິບັດມາດຕະການຕາມລະບຽບກົດໝາຍ ຕໍ່ຜູ້ລັກລອບນຳເຂົ້າ, ແລ້ວທຳລາຍຖິ້ມ.

3. ໃຫ້ພະແນກ ອຸດສາຫະກໍາ-ການຄ້າແຂວງ ສົມທົບກັບບັນດາເມືອງ ສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ຄໍາສັ່ງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 0874/ອຄ.ກຄພນ, ວ່າດ້ວຍ ການຕິດຕາມ, ກວດກາ, ສະກັດກັ້ນການນໍາເຂົ້າ, ເຄື່ອນຍ້າຍ ແລະ ຈໍາໜ່າຍໝູ ທີ່ບໍ່ຖືກຕ້ອງ ແລະ ຊີ້ນໍາໃຫ້ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນ ໄດ້ຮັບຮູ້ເຂົ້າໃຈ ມີສະຕິລະມັດລະວັງໃນການຊື້ຊີ້ນໝູ, ຜະລິດຕະພັນສັດມາບໍລິໂພກ, ແມ່ນໃຫ້ຊື້ ແລະ ບໍລິໂພກຊີ້ນໝູທີ່ຜະລິດຢູ່ພາຍໃນເທົ່ານັ້ນ; ຖ້າພົບເຫັນການນໍາເຂົ້າ, ເຄື່ອນຍ້າຍ ແລະ ຈໍາໜ່າຍຊີ້ນໝູທີ່ຕ້ອງສົງໄສ ຈົ່ງແຈ້ງຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຢ່າງຮີບດ່ວນ.

ສະນັ້ນ, ຈິ່ງແຈ້ງມາຍັງບັນດາທ່ານຮັບຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການນີ້ໃຫ້ໄດ້ຮັບຜົນດີ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ຫົວໜ້າຫ້ອງວ່າການແຂວງ

ຫ້ອງວ່າການ ແຂວງ

ເພັງສອນ ແກ້ວວິໄລ

ບ່ອນສົ່ງ.
- ພາກສ່ວນກ່ຽວຂ້ອງ 1 ສະບັບ
- ບັນດາເມືອງ 1 ສະບັບ
- ຄະນະຫ້ອງວ່າການ 1 ສະບັບ
- ສໍາເນົາ 1 ສະບັບ

ໂທ: ຂະແໜງສັງລວມລັດ 084 211017.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການແຂວງບໍ່ແກ້ວ
ເລກທີ 1055
ວັນທີ 12.6.017

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0874 /ອຄ.ກຄພນ
ນະຄອນຫຼວງວຽງຈັນ, ວັນທີ 02 ມິຖຸນາ 2017

# ຄຳສັ່ງ
## ວ່າດ້ວຍ ການຕິດຕາມ, ກວດກາ ແລະ ສະກັດກັ້ນ ການນຳເຂົ້າ, ເຄື່ອນຍ້າຍ ແລະ ຈຳໜ່າຍ, ໝູຊີ້ນ, ຊີ້ນໝູ (ສົດ ແລະ ແຊ່ແຂງ) ແລະ ຊີ້ນສ່ວນຜະລິດຕະພັນສັດ ທີ່ບໍ່ຖືກຕ້ອງ

**ເຖິງ: ທ່ານຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.**

- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 158/ຫສນຍ.ກສສ, ລົງວັນທີ 31 ມັງກອນ 2017 ກ່ຽວກັບການສະກັດກັ້ນການນຳເຂົ້າລູກໝູ ແລະ ໝູຊີ້ນ ຈາກປະເທດເພື່ອນບ້ານ.

ເພື່ອເປັນການສະກັດກັ້ນການນຳເຂົ້າ, ການເຄື່ອນຍ້າຍ ລູກໝູ, ພໍ່ແມ່ພັນໝູ, ໝູຊີ້ນ ແລະ ຊີ້ນໝູ (ສົດ ແລະ ແຊ່ແຂງ) ລວມທັງຊີ້ນສ່ວນສັດທີ່ນຳເຂົ້າບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ເຊິ່ງອາດສົ່ງຜົນກະທົບຕໍ່ການຜະລິດໝູ ແລະ ການສະໜອງຊີ້ນໝູ ເພື່ອບໍລິໂພກຢູ່ພາຍໃນ ພ້ອມທັງຫຼີກລ້ຽງການນຳເຂົ້າທີ່ອາດມີເຊື້ອພະຍາດຕ່າງໆເຂົ້າມາແຜ່ລະບາດຢູ່ປະເທດເຮົາ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ:**

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບຂະແໜງການກ່ຽວຂ້ອງຂັ້ນທ້ອງຖິ່ນຂອງຕົນ ເພື່ອຕິດຕາມ, ກວດກາ, ຕ້ານ ແລະ ສະກັດກັ້ນການນຳເຂົ້າ, ການເຄື່ອນຍ້າຍ ແລະ ຈຳໜ່າຍ ໝູຊີ້ນ ແລະ ຊີ້ນໝູ (ສົດ ແລະ ແຊ່ແຂງ) ລວມທັງຊີ້ນສ່ວນສັດຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ນຳເຂົ້າບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຖ້າພົບເຫັນໃຫ້ປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
2. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເກັບກຳຂໍ້ມູນສະຖິຕິ, ຂຶ້ນແຜນເພື່ອດຸ່ນດ່ຽງການສະໜອງ ແລະ ຄວາມຕ້ອງການບໍລິໂພກຊີ້ນໝູ ແລະ ຜະລິດຕະພັນໝູ, ຖ້າຫາກບໍ່ພໍໃຫ້ຂຶ້ນແຜນເພື່ອຂໍນຳເຂົ້າເປັນແຕ່ລະກໍລະນີ;
3. ໃຫ້ຄຸ້ມຄອງລາຄາສິນຄ້າສະບຽງອາຫານປະເພດຊີ້ນໝູຕາມຫຼັກການສິນຄ້າຄວບຄຸມ; ການຄຸ້ມຄອງທັງຂອດເກັບຊື້, ຂອດຂາຍຍົກ ແລະ ຂອດຂາຍຍ່ອຍ ໄປພ້ອມໆກັນ, ເປັນ ຕົ້ນແມ່ນຂອດນາຍຮ້ອຍ ແລະ ຂອດລູກຂຽງ ບົນພື້ນຖານໂຄງປະກອບລາຄາທີ່ຊັດເຈນຢູ່ໃນແຂວງນັ້ນໆ
4. ເຜີຍແຜ່ ແລະ ຊີ້ນຳຜູ້ປະກອບການ ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດ ແລະ ຮັບຜິດຊອບຢ່າງເປັນເຈົ້າການ, ກ່ອນຈະຂຶ້ນ ຫຼື ລົງລາຄາຊີ້ນໝູໃນແຕ່ລະຄັ້ງ, ຜູ້ປະກອບການຕ້ອງສະເໜີການປ່ຽນແປງລາຄາດັ່ງກ່າວເຖິງພາກລັດທີ່ກ່ຽວຂ້ອງ ເພື່ອຮັບຮອງ ແລະ ອະນຸມັດໃຫ້ຈຶ່ງສາມາດປະຕິບັດໄດ້;

5. ການນຳເຂົ້າໝູ, ຜະລິດຕະພັນໝູ ແລະ ຜະລິດຕະພັນສິນຄ້າທີ່ກ່ຽວກັບສັດມາຈຳໜ່າຍ ໃນ ສປປ ລາວ ຕ້ອງມີເອກະສານຕົ້ນຕໍ ດັ່ງນີ້:

- ມີໃບອະນຸຍາດນຳເຂົ້າທີ່ອອກໃຫ້ໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ (ຂະແໜງກະສິກຳ ແລະ ປ່າໄມ້);
- ມີໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ອອກໃຫ້ໂດຍອົງການ ຫຼື ເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງຂອງປະເທດຕົ້ນທາງ ທີ່ຖືກຕ້ອງຕາມເງື່ອນໄຂການນຳເຂົ້າຂອງ ສປປ ລາວ;
- ມີເອກະສານອື່ນທີ່ກ່ຽວຂ້ອງຕາມການກຳນົດຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃນກໍລະນີນຳເຂົ້າ ເພື່ອລ້ຽງເປັນແນວພັນ;
- ໃນກໍລະນີຫາກໄດ້ຮັບອະນຸຍາດໃຫ້ນຳເຂົ້າສັດ, ຜະລິດພັນສັດ ຫຼື ຜະລິດຕະພັນສິນຄ້າທີ່ກ່ຽວກັບສັດ ຕ້ອງນຳເຂົ້າຜ່ານດ່ານສາກົນທີ່ໄດ້ຮັບອະນຸຍາດ;

ນອກນີ້, ທຸກການນຳເຂົ້າ, ເຄື່ອນຍ້າຍລູກໝູ, ພໍ່ແມ່ພັນໝູ, ໝູຊີ້ນ ແລະ ຊີ້ນໝູ (ສົດ ແລະ ແຊ່ແຂງ) ລວມທັງຊີ້ນສ່ວນສັດແມ່ນໃຫ້ປະຕິບັດຕາມຄຳສັ່ງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍລູກໝູ ແລະ ໝູຊີ້ນ ເຂົ້າ ສປປ ລາວ;

6. ນອກຈາກເອກະສານທີ່ກ່າວມາຂ້າງເທິງແລ້ວ, ການກວດກາຕົວຈິງໃຫ້ສັງເກດເບິ່ງຈຳນວນ, ປະລິມານ, ຄຸນລັກສະນະຂອງສິນຄ້າ ເພື່ອໃຫ້ຖືກຕ້ອງຕາມເອກະສານອະນຸຍາດໃຫ້ນຳເຂົ້າ ຫຼື ເຄື່ອນຍ້າຍ;

7. ມອບໃຫ້ເຈົ້າໜ້າທີ່ກວດກາການຄ້າ ດຳເນີນການຕິດຕາມ-ກວດກາເປັນປົກກະຕິ ເພື່ອເຝົ້າລະວັງ ແລະ ສະກັດກັ້ນ ຜູ້ລະເມີດ, ຝ່າຝືນ, ນຳເຂົ້າ ຫຼື ລັກລອບນຳເຂົ້າ ໝູຊີ້ນ, ຊີ້ນໝູ (ສົດ ແລະ ແຊ່ແຂງ) ແລະ ຊີ້ນສ່ວນຜະລິດຕະພັນສັດ ໃຫ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ ດ້ວຍການກ່າວເຕືອນ, ປັບໄໝ ຫຼື ດຳເນີນຄະດີທາງແພ່ງ ຫຼື ທາງອາຍາຕາມແຕ່ລະກໍລະນີໜັກ ຫຼື ເບົາ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

8. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແຕ່ງຕັ້ງພະນັກງານຂອງຕົນລົງຕິດຕາມ, ກວດກາ ແຫຼ່ງທີ່ມາຂອງຊີ້ນໝູ ໂດຍປະສານສົມທົບກັບຈັດສັນຕະຫຼາດ ຫຼື ເຈົ້າຂອງຕະຫຼາດ ແລະ ພະນັກງານສັດຕະວະແພດ ເພື່ອຢັ້ງຢືນຄວາມຖືກຕ້ອງ ເຊັ່ນ: ໃບນຳສົ່ງຊີ້ນຈາກໂຮງງານຂ້າສັດ, ໃບເສຍພັນທະອາກອນ ແລະ ອື່ນໆ;

9. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ລາຍງານຜົນການຈັດຕັ້ງປະຕິບັດທຸກໆເດືອນ, ຖ້າຫາກພົບຂໍ້ຫຍຸ້ງຍາກໃນເວລາຈັດຕັ້ງປະຕິບັດ ໃຫ້ລາຍງານຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ເພື່ອຄົ້ນຄວ້າ ແລະ ໃຫ້ທິດຊີ້ນຳວິທີການແກ້ໄຂ;

10. ມອບໃຫ້ກົມການຄ້າພາຍໃນ ສົມທົບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການຊີ້ນຳ ໃນການຕິດຕາມ, ກວດກາ ຮ່ວມກັບບັນດາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເພື່ອສະກັດກັ້ນບັນຫາດັ່ງກ່າວຢ່າງເຂັ້ມງວດ;

11. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ເຂັມມະນີ ພົນເສນາ

<u>ບ່ອນສົ່ງ:</u>

- ຫ້ອງການສຳນັກງານນາຍົກລັດຖະມົນຕີ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
- ກະຊວງກະສິກຳ ແລະ ປ່າໄມ້ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
- ກະຊວງການເງິນ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
- ຫ້ອງວ່າການແຂວງ, ນະຄອນຫຼວງ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ 01 ສະບັບ.
- ຫ້ອງການ, ບັນດາກົມ ແລະ ສະຖາບັນຄົ້ນຄວ້າເສດຖະກິດ ແລະ ການຄ້າ 01 ສະບັບ.